# August Notice: HR 1 Work Requirement (Laotian)

### ຂໍ້ຄວາມ:

ນີ້ແມ່ນຂໍ້ຄວາມຈາກ RI Medicaid. ກົດລະບຽບໃໝ່ຂອງລັດຖະບານກາງຈະເລີ່ມມີຜົນບັງຄັບໃຊ້ໃນປີ 2027. ຜູ້ໃຫຍ່ບາງຄົນຈະຕ້ອງມີຄຸນສົມບັດຕາມຂໍ້ກໍານົດໃນການເຮັດວຽກ ແລະ ຕໍ່ອາຍຸ Medicaid ທຸກໆ 6 ເດືອນ. ສໍາລັບຂໍ້ມູນເພີ່ມເຕີມ, ເຂົ້າສູ່ລະບົບທີ່ healthyrhode.ri.gov ຫຼື ເຂົ້າເບິ່ງທີ່ staycovered.ri.gov/work.

### ແຈ້ງການ ແລະ ອີເມລ໌:

## ຂໍ້ມູນສໍາຄັນກ່ຽວກັບການຄຸ້ມຄອງ Medicaid ຂອງທ່ານ

ກົດໝາຍໃໝ່ຂອງລັດຖະບານກາງຈະປ່ຽນແປງກົດລະບຽບ Medicaid ສໍາລັບຜູ້ໃຫຍ່ໃນ Rhode Island ບາງຄົນເລີ່ມມີຜົນບັງຄັບໃຊ້ໃນປີ 2027. ການປ່ຽນແປງເຫຼົ່ານີ້ລວມມີ:

- ຂໍ້ກໍານົດໃນການເຮັດວຽກ
- ການຕໍ່ອາຍຸ Medicaid ທຸກໆ 6 ເດືອນ

ບັນທຶກຂອງພວກເຮົາສະແດງໃຫ້ເຫັນວ່າ ການປ່ຽນແປງເຫຼົ່ານີ້ອາດຈະນໍາໃຊ້ໄດ້ກັບທ່ານ. ແຈ້ງການສະບັບນີ້ຈະອະທິບາຍສິ່ງທີ່ກໍາລັງປ່ຽນແປງ ແລະ ສິ່ງທີ່ທ່ານອາດຈະຕ້ອງເຮັດ.

## ມີຫຍັງກໍາລັງປ່ຽນແປງ?

ເລີ່ມຕັ້ງແຕ່ປີ 2027ເປັນຕົ້ນໄປ, ກົດໝາຍຂອງລັດຖະບານກາງຈະກໍານົດໃຫ້ຜູ້ໃຫຍ່ບາງຄົນ ລາຍງານວຽກງານ ຫຼື ກິດຈະກໍາທີ່ກ່ຽວຂ້ອງຂອງພວກເຂົາເພື່ອຮັກສາ Medicaid. ກົດລະບຽບເຫຼົ່ານີ້ເອີ້ນວ່າ "ຂໍ້ກໍານົດໃນການເຮັດວຽກ" ແຕ່ພວກມັນລວມມີຫຼາຍກວ່າການຈ້າງງານ

ທ່ານສາມາດຕອບສະໜອງຕາມຂໍ້ກໍານົດໃນການເຮັດວຽກໄດ້ໂດຍການມີລາຍໄດ້ຢ່າງໜ້ອຍ $580 ຕໍ່ເດືອນ. ສໍາລັບແຮງງານຕາມລະດູການເທົ່ານັ້ນ, ຈະຕ້ອງມີລາຍໄດ້ສະເລ່ຍຕໍ່ເດືອນຢ່າງໜ້ອຍ $580 ໃນໄລຍະເວລາຫົກເດືອນຜ່ານມາຈຶ່ງມີສິດໄດ້ຮັບ.

ນອກຈາກນີ້ ທ່ານຍັງສາມາດຕອບສະໜອງຕາມຂໍ້ກໍານົດໃນການເຮັດວຽກໄດ້ໂດຍການເຮັດວຽກຄົບ 80 ຊົ່ວໂມງຕໍ່ເດືອນ ໂດຍເລືອກເຮັດວຽກຢ່າງໃດຢ່າງໜຶ່ງຕໍ່ໄປນີ້:

- ການເຮັດວຽກງານ
- ການເປັນອາສາສະໝັກ ຫຼື ໃຫ້ບໍລິການຊຸມຊົນຢູ່ໃນອົງການຂອງລັດ ຫຼື ອົງການທີ່ບໍ່ຫວັງຜົນກໍາໄລ
- ການເຂົ້າຮ່ວມໃນການຝຶກອົບຮົມວຽກເຮັດງານທໍາ, ໂຄງການທັກສະວຽກເຮັດງານທໍາ ຫຼື ໂຄງການພັດທະນາແຮງງານ
- ການເຂົ້າໂຮງຮຽນ ຫຼື ໂຄງການການຄ້າ ຫຼື ວິຊາຊີບຢ່າງໜ້ອຍເຄິ່ງເວລາ

ຖ້າທ່ານບໍ່ຕອບສະໜອງຕາມຂໍ້ກໍານົດ ຫຼື ບໍ່ຕອບຄໍາຮ້ອງຂໍຂໍ້ມູນໃນອະນາຄົດ, ການຄຸ້ມຄອງ Medicaid ຂອງທ່ານອາດຈະສິ້ນສຸດລົງ.

ນອກຈາກນີ້ ໃນປີ 2027, Medicaid ຈະຕໍ່ອາຍຸການຄຸ້ມຄອງຂອງທ່ານທຸກໆຫົກເດືອນ ແທນທີ່ຈະເປັນປີລະຄັ້ງ.

## ສິ່ງນີ້ຈະສົ່ງຜົນກະທົບຕໍ່ໃຜ?

ກົດລະບຽບເຫຼົ່ານີ້ນໍາໃຊ້ໄດ້ກັບຜູ້ໃຫຍ່ບາງຄົນທີ່ມີອາຍຸ 19–64 ປີ ທີ່ມີສິດໄດ້ຮັບ Medicaid ໂດຍອີງຕາມລາຍໄດ້ເທົ່ານັ້ນ. ພາຍໃຕ້ກົດໝາຍຂອງລັດຖະບານກາງ, "ບຸກຄົນທີ່ກ່ຽວຂ້ອງ" ແມ່ນຜູ້ທີ່ຕ້ອງຕອບສະໜອງຕາມຂໍ້ກໍານົດໃນການເຮັດວຽກ ເວັ້ນແຕ່ວ່າພວກເຂົາມີສິດໄດ້ຮັບການຍົກເວັ້ນ.

ຂໍ້ກໍານົດໃນການເຮັດວຽກ ບໍ່ໄດ້ນໍາໃຊ້ກັບທ່ານ ຖ້າທ່ານ:

- ມີອາຍຸຕໍ່າກວ່າ 19 ປີ ຫຼື ສູງກວ່າ 64 ປີ;
- ເປັນພໍ່ແມ່ ຫຼື ຜູ້ປົກຄອງທີ່ຖືກຕ້ອງຕາມກົດໝາຍຂອງເດັກທີ່ມີອາຍຸຕໍ່າກວ່າ 19 ປີ ຜູ້ທີ່ອາໄສຢູ່ໃນຄົວເຮືອນຂອງທ່ານ;

BE READY.
STAY COVERED.

- ເປັນຜູ້ດູແລຂອງເດັກທີ່ມີອາຍຸຕ່ຳກວ່າ 14 ປີ;
- ເປັນຜູ້ດູແລຂອງບຸກຄົນທີ່ມີຄວາມພິການໃນທຸກໄວ;
- ມີສະພາບທາງດ້ານຮ່າງກາຍ, ສະຕິປັນຍາ, ການພັດທະນາ ຫຼື ຈິດໃຈທີ່ເຮັດໃຫ້ຍາກຕໍ່ການເຮັດວຽກ, ເຂົ້າໂຮງຮຽນ ຫຼື ເປັນອາສາສະໝັກ;
- ມີສະພາບທາງການແພດທີ່ຮ້າຍແຮງ ຫຼື ສັບຊ້ອນທີ່ເຮັດໃຫ້ຍາກຕໍ່ການເຮັດວຽກ, ເຂົ້າໂຮງຮຽນ ຫຼື ເປັນອາສາສະໝັກ;
- ຢູ່ໃນໂຄງການປິ່ນປົວຢາເສບຕິດ ຫຼື ເຫຼົ້າ;
- ຕອນນີ້ກຳລັງຖືພາຢູ່ ຫຼື ເຄີຍມີລູກໃນປີທີ່ຜ່ານມາ;
- ເປັນຊາວອາເມລິກັນພື້ນເມືອງ ຫຼື ຊາວອາລາສກາພື້ນເມືອງ;
- ຢູ່ໃນຄຸກ ຫຼື ບ່ອນກັກຂັງພາຍໃນສາມເດືອນທີ່ຜ່ານມາ;
- ຢູ່ໃນສະຖານສົງເຄາະເມື່ອທ່ານມີອາຍຸ 18 ປີ;
- ເປັນນັກຮົບເກົ່າທີ່ມີລະດັບຄວາມພິການທັງໝົດ (100%);
- ກຳລັງໄດ້ຮັບ TANF ແລະ ຕອບສະໜອງຕາມຂໍ້ກຳນົດໃນການເຮັດວຽກ TANF;
- ກຳລັງໄດ້ຮັບ SNAP ແລະ ຕອບສະໜອງຕາມຂໍ້ກຳນົດໃນການເຮັດວຽກ SNAP;
- ໄດ້ລົງທະບຽນໃນ Medicare ຫຼື ກຳລັງໄດ້ຮັບ SSI/SSDI ຫຼື ຜົນປະໂຫຍດດ້ານຄວາມພິການ.

ທ່ານອາດຈະມີສິດໄດ້ຮັບການຍົກເວັ້ນ-ຊົ່ວຄາວ ເນື່ອງຈາກຄວາມຍາກລຳບາກ ຖ້າທ່ານບໍ່ສາມາດຕອບສະໜອງຕາມຂໍ້ກຳນົດໃນການເຮັດວຽກໄດ້ ເພາະວ່າ:

- ທ່ານກຳລັງເຂົ້າຮັບການດູແລໃນໂຮງໝໍ ຫຼື ການດູແລທາງການແພດແບບເຂັ້ມຂຸ້ນອື່ນໆ ທີ່ຄ້າຍຄືກັນ ຫຼື
- ທ່ານຕ້ອງເດີນທາງອອກນອກຊຸມຊົນຂອງທ່ານເປັນເວລາດົນນານເພື່ອຮັບການປິ່ນປົວທີ່ຈຳເປັນທາງການແພດສຳລັບອາການຮ້າຍແຮງ ຫຼື ສັບຊ້ອນທີ່ທ່ານບໍ່ສາມາດໄດ້ຮັບໃນທ້ອງຖິ່ນ.

## ຂ້າພະເຈົ້າຈະຕ້ອງເຮັດຫຍັງເພື່ອຕໍ່ອາຍຸ Medicaid ຂອງຂ້າພະເຈົ້າ?

ເລີ່ມຕັ້ງແຕ່ປີ 2027 ເປັນຕົ້ນໄປ, ພວກເຮົາຈະກວດສອບການມີສິດໄດ້ຮັບ Medicaid ຂອງທ່ານທຸກໆ 6 ເດືອນ. ໃນການຕໍ່ອາຍຸແຕ່ລະຄັ້ງ, ພວກເຮົາຈະກວດສອບຂໍ້ມູນ 6 ເດືອນທີ່ຜ່ານມາເພື່ອເບິ່ງວ່າທ່ານ:

- ປະຕິບັດຕາມຂໍ້ກຳນົດໃນການເຮັດວຽກຢ່າງໜ້ອຍໜຶ່ງເດືອນຫຼືບໍ່, ຫຼື
- ມີສິດໄດ້ຮັບການຍົກເວັ້ນຢ່າງໜ້ອຍໜຶ່ງເດືອນຫຼືບໍ່.

ຖ້າພວກເຮົາຕ້ອງການຂໍ້ມູນເພີ່ມເຕີມ, ພວກເຮົາຈະສົ່ງແຈ້ງການໃຫ້ທ່ານ

ເພື່ອອະທິບາຍເອກະສານທີ່ຕ້ອງສົ່ງ. ຖ້າທ່ານບໍ່ໄດ້ຮັບການຍົກເວັ້ນຈາກຂໍ້ກຳນົດໃນການເຮັດວຽກ, ພວກເຮົາຈະສອບຖາມລາຍລະອຽດກ່ຽວກັບຊົ່ວໂມງເຮັດວຽກ, ການເຂົ້າຮຽນ, ການເປັນອາສາສະໝັກ, ການຝຶກອົບຮົມວຽກ ຫຼື ລາຍໄດ້ຂອງທ່ານ. ແຈ້ງການສະບັບນີ້ບໍ່ໄດ້ໝາຍຄວາມວ່າທ່ານຈະສູນເສຍການຄຸ້ມຄອງ. ມັນໝາຍຄວາມວ່າພວກເຮົາຈຳເປັນຕ້ອງກວດສອບສະຖານະການຂອງທ່ານພາຍໃຕ້ກົດລະບຽບໃໝ່.

## ຈະເກີດຫຍັງຂຶ້ນ ຖ້າຂ້າພະເຈົ້າບໍ່ຕອບສະໜອງຕາມຂໍ້ກຳນົດໃນການເຮັດວຽກໃໝ່?

ຖ້າທ່ານບໍ່ຕອບສະໜອງຕາມຂໍ້ກຳນົດໃນການເຮັດວຽກ ແລະ ບໍ່ມີສິດໄດ້ຮັບການຍົກເວັ້ນ:

- ການຄຸ້ມຄອງ Medicaid ຂອງທ່ານອາດຈະສິ້ນສຸດລົງ.
- ທ່ານອາດຈະບໍ່ສາມາດໄດ້ຮັບຄວາມຊ່ວຍເຫຼືອໃນການຈ່າຍຄ່າຄຸ້ມຄອງຂອງ HealthSource RI.
- ທ່ານສາມາດສະໝັກຂໍ Medicaid ຄືນໃໝ່ໄດ້ຕະຫຼອດເວລາ, ແຕ່ທ່ານອາດຈະມີຊ່ອງຫວ່າງໃນການຄຸ້ມຄອງ.

## ສິ່ງທີ່ທ່ານຕ້ອງເຮັດຕອນນີ້

- ຕອນນີ້ ທ່ານບໍ່ຈຳເປັນຕ້ອງລາຍງານການເຮັດວຽກ ຫຼື ກິດຈະກຳທີ່ກ່ຽວຂ້ອງຂອງທ່ານ. ເຖິງຢ່າງໃດກໍ່ຕາມ, ເລີ່ມຕັ້ງແຕ່ໃນປີ 2027 ເປັນຕົ້ນໄປ, ພວກເຮົາອາດຈະຂໍໃຫ້ທ່ານສົ່ງຂໍ້ມູນກ່ຽວກັບວຽກງານ, ໂຮງຮຽນ, ການເປັນອາສາສະໝັກ ຫຼື ລາຍໄດ້ຂອງທ່ານໃຫ້ພວກເຮົາ. ການຮັກສາບັນທຶກ ຫຼື ເອກະສານຕ່າງໆ ໃນຕອນນີ້ (ເຊັ່ນ: ໃບຮັບເງິນເດືອນ ຫຼື ຊົ່ວໂມງເຮັດວຽກເປັນອາສາສະໝັກ) ອາດເຮັດໃຫ້ການລາຍງານງ່າຍຂຶ້ນ ຖ້າພວກເຮົາຂໍໃນພາຍຫຼັງ.
- ເຮັດໃຫ້ແນ່ໃຈວ່າທີ່ຢູ່ໄປສະນີ, ໝາຍເລກໂທລະສັບ ແລະ ອີເມລ໌ຂອງທ່ານໄດ້ຮັບການອັບເດດເປັນປະຈຳ ເພື່ອບໍ່ໃຫ້ທ່ານພາດແຈ້ງການທີ່ສຳຄັນ. ຮຽນຮູ້ວິທີການໄດ້ທີ່ staycovered.ri.gov/update-account.
- ກວດສອບວັນທີຕໍ່ອາຍຸຄັ້ງຕໍ່ໄປຂອງທ່ານທາງອອນລາຍໄດ້ທີ່ ri.gov/EOHHS/medicaid_renewal.

BE READY.
STAY COVERED.

## ສິ່ງທີ່ຈະເກີດຂຶ້ນຕໍ່ໄປ

ຖ້າພວກເຮົາຕ້ອງການຂໍ້ມູນເພີ່ມເຕີມຈາກທ່ານ, ພວກເຮົາຈະສົ່ງແຈ້ງການໃຫ້ທ່ານ. ເຊິ່ງຈະປະກອບມີ:

- ບັນຊີລາຍຊື່ຂໍ້ຍົກເວັ້ນ (ສິ່ງທີ່ໝາຍຄວາມວ່າທ່ານບໍ່ຈຳເປັນຕ້ອງລາຍງານກິດຈະກຳການເຮັດວຽກຂອງທ່ານ).
- ຄຳແນະນຳກ່ຽວກັບວິທີສະແດງໃຫ້ພວກເຮົາເຫັນວ່າທ່ານມີຂໍ້ຍົກເວັ້ນ.
- ຂໍ້ມູນເພີ່ມເຕີມກ່ຽວກັບຂໍ້ກຳນົດໃນການເຮັດວຽກ.
- ວິທີການລາຍງານວຽກງານ, ໂຮງຮຽນ, ການຝຶກອົບຮົມວຽກ, ການເປັນອາສາສະໝັກ ຫຼື ລາຍໄດ້.
- ກຳນົດເວລາສົ່ງຂໍ້ມູນ.
- ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາເຂົ້າເບິ່ງທີ່ staycovered.ri.gov/work.

BE READY.
STAY COVERED.